# 10 ຄຳທຳນາຍສະທ້ານໂລກ

"ໂລກນີ້ຈະມີມື້ອາວະສານບໍ" "ໂລກນີ້ຈະແຕກບໍ" ສົງຄາມນິວເຄລີຍທີ່ຈະລ້າງໂລກຈະເກີດຂື້ນບໍ".

ຄຳເວົ້າເຫລົ່ານີ້ເປັນຄຳເວົ້າທີ່ພວກເຮົາມັກຈະໄດ້ຍິນໄດ້ຟັງຢູ່ສະເໝີ ພຣະຄຳພີຂອງຄຣິສຕຽນໄດ້ບອກຢ່າງຈະແຈ້ງວ່າ "ໂລກນີ້ຈະມີມື້ໜຶ່ງທີ່ຈະອາວະສານ" ແລະການອາວະສານ. (ສີ້ນສຸດໂລກ). ກໍ່ກ່ຽວຂ້ອງກັບພຣະເຢຊູຄຣິດດ້ວຍ.

**ເປັນຫຍັງການສີ້ນສຸດໂລກຈື່ງກ່ຽວຂ້ອງກັບພຣະເຢຊູຄຣິດ.**

ພຣະເຢຊູຄຣິດເວົ້າຢ່າງຈະແຈ້ງວ່າ "ການສະເດັດມາຄັ້ງທຳອິດຂອງພຣະອົງມາເພື່ອກຳຈັດບາບ. (ຮັບແບກບາບແທນມະນຸດ). ໂດຍການຕາຍໄຖ່ບາບເທິງໄມ້ກາງແຂນ." ຫລັງຈາກພຣະອົງຕາຍແລ້ວ 3 ມື້ພະອົງກໍຊົງຟື້ນຈາກຕາຍແລະສະເດັດຂື້ນສູ່ສະຫວັນແລະກ່ອນທີ່ພຣະອົງຈະສະເດັດຂື້ນນັ້ນ ພຣະອົງໄດ້ເວົ້າອີກວ່າ "ໃນບໍ່ຊ້າເຮົາຈະກັບມາອີກ ມາເພື່ອຮັບເອົາຄົນທີ່ສຳນຶກວ່າຕົນເອງເປັນຄົນຜິດບາບແລະເຊື່ອໃນເຮົາ. ໄປຢູ່ສະຫວັນກັບເຮົາ ແຕ່ຄົນທີ່ປະຕິເສດການຊ່ວຍເຫລືອຈາກເຮົາ ເຂົາກໍ່ຕ້ອງພົບກັບການພິພາກສາທີ່ຍຸດຕິທຳຂອງເຮົາຕາມຜົນການກະທຳຂອງເຂົາເອງ".

ແຕ່ດ້ວຍຄວາມຮັກທີ່ພຣະເຢຊູຄຣິດຊົງມີຕໍ່ມວນມະນຸດພຣະອົງຊົງເວົ້າຄຳທຳນາຍ 10 ປະການໄວ້ລ່ວງໜ້າເພື່ອຖ້າມະນຸດຄົນໃດໄດ້ເຫັນຄຳທຳນາຍ 10 ປະການເກີດຂື້ນແລ້ວເຂົາຈະໄດ້ກັບໃຈສຳນຶກໃນຄວາມຜິດບາບແລະຫັນກັບມາຫາພຣະເຈົ້າຜູ້ຊົງສ້າງແລະຮັກເຂົາ (ກ່ອນທີ່ຈະສາຍເກີນໄປຖ້າເຫດການ 10 ປະການນີ້ເກີດຂື້ນເມື່ອໃດ ສະແດງວ່າໂລກໃກ້ມາເຖິງຈຸດຈົບຂອງມັນແລ້ວ).

ຜູ້ອ່ານທີ່ຮັກ 10 ຄຳທຳນາຍຂ້າງລຸ່ມຕໍ່ໄປນີ້ ເປັນຄຳທຳນາຍທີ່ບັນທຶກໄວ້ໃນພຣະຄຳພີເມື່ອເກືອບ 2000ປີທີ່ແລ້ວ ປະຈະບັນນີ້ຄຳທຳນາຍເຫລົ່ານີ້ໄດ້ເກີດຂື້ນຈິງຕາມທີ່ພຣະເຢຊູໄດ້ຊົງທຳນາຍໄວ້ແລ້ວນັ້ນຄື:

<u>ຄຳທຳນາຍປະການທີ1</u> ປະເທດອິດສະຣາເອນຈະຕ້ອງລວມຕົວເປັນປະເທດຂື້ນມາໃໝ່ (ມທ 24:32-35)

ຊື່ງຄົນໃນປະເທດນີ້ໄດ້ແຕກກະຈັດກະຈາຍໄປທົ່ວໂລກເຖິງ 2590ປີມາແລ້ວ ແຕ່ເມື່ອປີຄຣິດຕະສັກກະຫລາດ 1948 ຄືເມື່ອສີ່ເຖິງຫ້າສິບປີກ່ອນຄົນອິດສະຣາເອນທີ່ກະຈັດກະຈາຍໄປທົ່ວໂລກນັ້ນກໍ່ໄດ້ກັບມາລວມຕົວເປັນປະເທດອິດສະຣາເອນອີກຄັ້ງໜື່ງຈົນທຸກມື້ນີ້ຊື່ງເປັນຈິງຕາມຄຳທຳນາຍແລ້ວ.

<u>ຄຳທຳນາຍປະການທີ2</u> ຈະມີຜູ້ອ້າງຕົວວ່າ "ຂ້ອຍຄືພຣະເຢຊູຄຣິດ" (ມທ 24:5)

ຊື່ງເຮົາກໍ່ເຫັນແຈ້ງໃນໜ້າຂ່າວທີ່ປາກົດໃນໜັງສືພິມ ຄື: ທ່ານຈິມໂຈນແລະທ່ານເດວິດ ໂຄເລດ ຊື່ງອ້າງຕົວເປັນພຣະເຢຊູຄຣິດ (ໃນອະດີດບໍ່ເຄີຍມີຄົນມາອ້າງເພີ່ງຈະມີໃນຍຸກນີ້ ນັ້ນສະແດງວ່າໃກ້ຈະເຖິງອາວະສານແລ້ວຈິງໆ.)

<u>ຄຳທຳນາຍປະການທີ3</u> ຈະເກີດສົງຄາມກັບຂ່າວລືເລື່ອງສົງຄາມ (ມທ24:6)

ເລີ້ມຕັ້ງແຕ່ການປະທ້ວງ ການຂັດແຍ່ງພາຍໃນປະເທດແລະລຸກລາມໄປຈົນເຖິງສົງຄາມໂລກນັບຕັ້ງແຕ່ຕົ້ນສັດຕະວັດທີ່ 20ນີ້ເປັນຕົ້ນມາໄດ້ເກີດສົງຄາມໂລກເຖິງ 20ຄັ້ງ ແລະຂ່າວລືເລື່ອງສົງຄາມໂລກຄັ້ງທີ 3 ກໍລືກັນເລື້ອຍໆ.

<u>ຄຳທຳນາຍປະການທີ4</u> ຈະເກີດແຜ່ນດິນໄຫວໃນທີ່ຕ່າງໆທົ່ວໂລກ (ມທ 24:7)

ຊຶ່ງພວກເຮົາກໍ່ໄດ້ເຫັນກັບດ້ວຍສາຍຕາກັນຢູ່ ແລ້ວແລະການເກີດແຜ່ນດິນໄຫວໃນແຕ່ລະຄັ້ງກໍ່ທະວີຄວາມຮຸນແຮງແລະກືນກິນຊີວິດຂອງມະນຸດຫລາຍຂື້ນເລື້ອຍໆ ແລະເປັນທີ່ໜ້າສັງເກດຢ່າງໜຶ່ງຄື ປະເທດທີ່ບໍ່ເຄີຍມີແຜ່ນດິນໄຫວກໍ່ເລີ່ມມີແຜ່ນດິນໄຫວເກີດຂື້ນແລ້ວ. ເມືອງລາວເຮົາກໍ່ເລີ່ມເຄື່ອນໄຫວເຊັ່ນດຽວກັນ.

ຄຳທຳນາຍປະການທີ 5 ຈະເກີດການກັນດານອາຫານ (ມທ 24:7)

ເພາະການສົງຄາມແລະປະຊາກອນຂອງໂລກທີ່ເພີ່ມຂື້ນຢ່າງໄວວາ ດິນຟ້າອາກາດເລີ່ມປ່ຽນແປງ ອາກາດເລີ້ມເປັນພິດ ສະພາບແວດລ້ອມເລີ່ມເສື່ອມໂຊມ ປັດຈຸບັນນີ້ມີຄົນຫລາຍກວ່າເຄິ່ງໂລກທີ່ກຳລັງຂາດອາຫານ ແລະປັດຈຸບັນນີ້ກໍ່ມີເດັກນ້ອຍຕາຍເພາະຂາດອາຫານສະເລ່ຍແລ້ວມື້ລະປະມານເຖິງ 40.000ຄົນທົ່ວໂລກ.

<u>ຄຳທຳນາຍປະການທີ6</u> ຈະມີຄົນສອນຜິດເກີດຂື້ນຢ່າງຫລວງຫລາຍ (ມທ 24:23-24)

ຄົນເຫລົ່ານີ້ຈະອ້າງຕົວເອງວ່າເຂົາສາມາດຊ່ວຍຄົນໃຫ້ລອດພົ້ນໄດ້ ແລະເຂົາເປັນພວກຄຣິສຕຽນແທ້ຈິງ ແຕ່ທີ່ຈິງແລ້ວພວກເຂົາເຫລົ່ານີ້ເປັນພວກສອນຜິດ ພວກເຂົາຈະຫລອກລວງໃຫ້ຄົນເຊື່ອໃນພະຄຳພີ, ຄຳສອນຊຶ່ງເປັນຄວາມຄິດຂອງມະນຸດຫລືເປັນຄຳສອນທີ່ພວກເຂົາຄິດຂື້ນນັ້ນມາເອງ. ທ່ານຄົງຈະເຄີຍເຫັນມາແດ່ແລ້ວເຊັ່ນພວກຟລັ່ງພູກເນັກໄທຊີ່ລັດທິບຫລືພວກແຟມມິລີທີ່ຄອຍຈັບເດັກນ້ອຍທີ່ມີບັນຫາເພື່ອຂາຍຕົວຫາເງິນເຂົ້ານິກາຍຫລືລັດທິ ໂອນຊິນລິຄຽວທີ່ອ້າງວ່າຕົວເອງເປັນຜູ້ວິເສດ.

<u>ຄຳທຳນາຍປະການທີ7</u> ຈະມີໂລກລະບາດ ໂລກຮ້າຍທີ່ຮຸນແຮງແລະຮ້າຍກາດເກີດຂື້ນໃນໂລກ (ລກ 21:11)

ປັດຈຸບັນນີ້ເຮົາຈະເຫັນວ່າໂລກເອດ ອີໂບລ່າ ກຳລັງກະຈາຍໄປທົ່ວໂລກ ແມ້ແຕ່ວົງການແພດເອງກໍ່ໝົດປັນຍາໃນການຮັກຫລືແກ້ໄຂໂລກເຫລົ່ານີ້ໄດ້.

<u>ຄຳທຳນາຍປະການທີ8</u> ຄວາມຮູ້ຂອງມະນຸດຈະທະວີຫລາຍຂື້ນ (ດລຕ 12:4)

ນີ້ເປັນເລື່ອງຈິງທີ່ພວກເຮົາປະຕິເສດບໍ່ໄດ້ເລີຍ ເພາະຄວາມຮູ້ແລະຄວາມຈະເລີນຂອງຄົນໃນຍຸກນີ້ນັ້ນກ້າວໜ້າແລະກ້າວໄວຫລາຍກວ່າຄົນໃນອະດີດຫລາຍຮ້ອຍພັນເທົ່າ.

<u>ຄຳທຳນາຍປະການທີ9</u> ຄວາມຜິດບາບຈະທະວີຄວາມຮຸນແຮງຫລາຍຂື້ນ (ມທ 24:12) (2ຕມທ 3:1-5)

ການລ່ວງປະເວນີ ການຜິດເລື່ອງເພດ ການຢ່າຮ້າງກຳລັງເປັນເລື່ອງທີ່ທຳມະດາໃນສັງຄົມ ການອັກກະຕັນຍຸພໍ່ແມ່ ການຖຽງພໍ່ແມ່ ການເຮັດໃຫ້ພໍ່ແມ່ເສຍໃຈເປັນເລື່ອງປົກກະຕິ ການອ້າກັນ ການຜິດຖຽງກັນ ຈະເປັນເລື່ອງທຳມະດາໃນສັງຄົມຄົນເຮົາຈະຍຶງຖືສາສະໜາແຕ່ເປືອກນອກ ແຕ່ແກ່ນແທ້ຂອງສາດສະໜານັ້ນເຂົາກັບປະຕິເສດ ນີ້ກຳລັງສະແດງໃຫ້ເຫັນວ່າ ຄວາມຜິດບາບກຳລັງທະວີຄວາມຮຸນແຮງຫລາຍຂື້ນຈິງໆ.

<u>ຄຳທຳນາຍປະການທີ10</u> ຂ່າວປະເສີດເລື່ອງພຣະເຢຊູຄຣິດຈະຕ້ອງກະຈາຍໄປທົ່ວໂລກແລ້ວວາລະສຸດທ້າຍຂອງໂລກກໍ່ຈະມາເຖິງ.

ຊຶ່ງມື້ນີ້ເຮົາກໍ່ເຫັນວ່າຂ່າວປະເສີດເລື່ອງພຣະເຢຊູຄຣິດນັ້ນ ກຳລັງແຜ່ກະຈາຍອອກໄປທົ່ວໂລກຈິງໆ ນັ້ນສະແດງວ່າໂລກຂອງເຮົາກຳລັງຈະໃກ້ເຖິງທີ່ສຸດຂອງມັນແລ້ວ (ມທ24:14)

ຫລັງຈາກຄຳທຳນາຍທັງ 10 ປະການໄດ້ສຳເລັດແລ້ວມື້ນັ້ນໂລກໃບນີ້ຂອງເຮົາຈະຕ້ອງຖືກເຜົາຜານດ້ວຍໄຟມະໃລກັນແລະຫລັງຈາກນັ້ນດວງຕາທຸກຄູ່ຂອງມະນຸດຈະໄດ້ເຫັນການພິພາກສາອັນທ່ຽງທຳຂອງພຣະເຢຊູຄຣິດ.